ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ.

ຫ້ອງການ                                                                                    ເລກທີ 1452 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ,ວັນທີ 19 ກໍລະກົດ2019.

# ແຈ້ງການ

ເຖິງ: - ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ.
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.
- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ.
- ປະຊາຊົນບັນດາເຜົ່າ ແລະ ຜູ້ລົງທຶນ(ພາຍໃນ ແລະ ຕ່າງປະເທດ) ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ.

ເລື່ອງ: ເປີດນຳໃຊ້ເວັບໄຊ້ໃໝ່ www.ned.gov.la ປ່ຽນແທນເວັບໄຊ້ເກົ່າ www.erm.gov.la

ເພື່ອເຮັດໃຫ້ການບໍລິການຂໍ້ມູນຂ່າວສານ ກ່ຽວກັບວຽກງານທະບຽນ ແລະຄຸ້ມຄອງວິສາຫະກິດຂອງຂະແໜງອຸດສາຫະກຳ ແລະການຄ້າ, ໃຫ້ໄດ້ຖືກເຜີຍແຜ່ອອກສູ່ສາທະລະນະຊົນຫຼາຍຂຶ້ນ.

ຫ້ອງການ, ກະຊວງອຸດສາຫະກຳ ແລະການຄ້າ, ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ດັ່ງນີ້:

1. ເປີດນຳໃຊ້ເວັບໄຊ້ ຖານຂໍ້ມູນວິສາຫະກິດແຫ່ງຊາດ ທີ່ຂຶ້ນກັບກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະການຄ້າ ຊື່ເວັບໄຊ້ແມ່ນ www.ned.gov.la ຊຶ່ງໄດ້ເປີດນຳໃຊ້ເລີ່ມແຕ່ວັນທີ 13 ມິຖຸນາ 2019, ໃນເວັບໄຊ້ປະກອບມີຂໍ້ມູນທີ່ກ່ຽວຂ້ອງກັບວຽກງານທະບຽນວິສາຫະກິດເຊັ່ນ: ກົດໝາຍ,ນິຕິກຳ,ແບບຟອມ,ຄ່າທຳນຽມ,ການຄົ້ນຫາວິສາຫະກິດ,ສະຖິຕິ ແລະອື່ນໆ ນອກຈາກນີ້ຍັງໄດ້ແບ່ງກຸ່ມຜູ້ຊົມໃຊ້ເປັນ3ກຸ່ມຄື: ລັດຖະບານ,ນັກລົງທຶນ ແລະສາທາລະນະ ເພື່ອໃຫ້ຜູ້ຊົມໃຊ້ມີຄວາມສະດວກໃນການຊອກຂໍ້ມູນວິສາຫະກິດ, ຍັງໄດ້ເພີ່ມເຕີມກ່ຽວກັບຜັງຂໍ້ມູນວິສາຫະກິດ ແລະແຜນວາດຈຳນວນສະຖິຕິເພື່ອໃຫ້ເຫັນທີ່ຕັ້ງ ແລະ ຈຳນວນວິສາຫະກິດໄດ້ຢ່າງຊັດເຈນ.
2. ໄດ້ປ່ຽນຊື່ເວັບໄຊ້ ຈາກ www.erm.gov.la ມາເປັນ www.ned.gov.la
3. ຜູ້ສົນໃຈ ສາມາດໃຊ້ບໍລິການໄດ້ໂດຍບໍ່ຈຳກັດ ວັນ, ເວລາ ແລະ ບໍ່ໄດ້ເສຍຄ່າບໍລິການ

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ.

ຫົວໜ້າຫ້ອງການ.

ຫ້ອງການ

ນ.ບານສະຕີ ເທບພະວົງ